ຄິງ ຄາວຕີ້

# ແຈ້ງການວ່າດ້ວຍການຮັກສາຄວາມລັບສ່ວນຕົວ

**ຄໍານໍາ**

ຄິງ ຄາວຕີ້, ເຊິ່ງເປັນອົງກອນຂອງຣັຖບານ, ໄດ້ດໍາເນີນກິດຈະການສາທາລະນະ ແລະ ການບັນທຶກຕ່າງໆ ຂອງອົງກອນທີ່ກ່ຽວພັນເຖິງກິດຈະການຂອງຄິງ ຄາວຕີ້ ໂດຍທົ່ວໄປແລ້ວຈະມີໄວ້ສໍາລັບເຜີຍແຜ່ຕໍ່ ສາທາລະນະຊົນ ໃຫ້ສາມາດກວດເບິ່ງຄືນໄດ້. ຢ່າງໃດກໍ່ຕາມ, ຄິງ ຄາວຕີ້ ຮັບຜິດຊອບ, ຕາບເທົ່າທີ່ອະນຸຍາດໂດຍກົດໝາຍ, ໃນການ ປົກປ້ອງ ແລະ ໃຫ້ຄວາມປອດພັຍແກ່ຂໍ້ມູນສ່ວນຕົວຂອງທ່ານທີ່ມີຢູ່ໃນການບັນທຶກຂອງຄິງ ຄາວຕີ້. ຄວາມຮັບຜິດຊອບ ຕໍ່ກັບການຮັກສາຄວາມລັບສ່ວນຕົວນີ້ຈໍາຕ້ອງໃຫ້ມີຄວາມສົມດູນກັບສິດທິໃນການເຂົ້າເຖິງຂໍ້ມູນພາຍໃຕ້ ມາດຕາ 42.17 RCW ຂອງ (ກົດໝາຍວ່າດ້ວຍການເປີດເຜີຍຕໍ່ສາທາລະນະຂອງຣັຖວໍຊິງຕັນ) ແລະ ໃຫ້ສອດຄ່ອງກັບ KCC 2.14.030 ແລະ ລະບຽບ ຫຼື ຣັຖະບັນຍັດ ຂອງຣັຖບານກາງ, ຣັຖ ແລະ ຂອງທ້ອງຖິ່ນທີ່ຍັງບັງຄັບໃຊ້ຢູ່.

ແຈ້ງການວ່າດ້ວຍການຮັກສາຄວາມລັບສ່ວນຕົວນີ້ ນໍາໃຊ້ບໍ່ໄດ້ກັບ ແຟ້ມບຸກຄະລາກອນ, ໃບສະໝັກງານ, ບັນທຶກຂອງ ສານ, ການສືບສວນພາຍໃຕ້ກົດໝາຍ, ການສືບສວນຕາມລະບຽບການ, ບົດບັນທຶກຂອງຜູ້ປະເມີນຜົນ, ແລະ ເອກະສານ ບັນທຶກ ທີ່ຖືກຮັກສາໄວ້ໂດຍ ໜ່ວຍງານບັນທຶກ, ໜ່ວຍງານເລືອກຕັ້ງ, ແລະ ໜ່ວຍງານການອອກໃບອະນຸຍາດຕ່າງໆ.

**ຂໍ້ມູນທີ່ເປັນຄວາມລັບສ່ວນຕົວ**

ຄິງ ຄາວຕີ້ ຮວບຮວມຂໍ້ມູນສ່ວນຕົວ ເມື່ອເຫັນວ່າມີຄວາມກ່ຽວຂ້ອງ ແລະ ມີຄວາມຈໍາເປັນ ເພື່ອໃຫ້ບັນລຸເປົ້າໝາຍ ທາງທຸລະກິດຂອງຄາວຕີ້. ພວກເຮົາຮັບເອົາຂໍ້ມູນພວກນີ້ໂດຍວິທີທາງທີ່ສອດຄ່ອງກັບກົດໝາຍເທົ່ານັ້ນ. ເມື່ອໃດກໍ່ຕາມ ທີ່ທາງເຂດປົກຄອງເກັບກໍາຂໍ້ມູນສ່ວນຕົວຈາກທ່ານ, ພວກເຮົາຈະ:

- ບອກກັບທ່ານວ່າດ້ວຍເຫດອັນໃດ ພວກເຮົາຈິ່ງເກັບກໍາຂໍ້ມູນສ່ວນຕົວນີ້.
- ຈໍາກັດຈໍານວນຂໍ້ມູນສ່ວນຕົວຂອງທ່ານເທົ່າທີ່ຈໍາເປັນຕໍ່ກັບຈຸດປະສົງທີ່ກ່າວມານັ້ນ.
- ນໍາໃຊ້ບາດກ້າວທີ່ມີເຫດມີຜົນໃນການນໍາໃຊ້ຂໍ້ມູນສ່ວນຕົວຂອງທ່ານ ເພື່ອຈຸດປະສົງທີ່ກ່າວນັ້ນ.
- ນໍາໃຊ້ບາດກ້າວເພື່ອເຮັດໃຫ້ແນ່ໃຈວ່າຂໍ້ມູນສ່ວນຕົວຂອງທ່ານນັ້ນຖືກຕ້ອງ, ສົມບູນ ແລະ ທັນສະພາບການ.
- ໃຫ້ຂໍ້ມູນສ່ວນຕົວຂອງທ່ານຕໍ່ກັບເຈົ້າໜ້າທີ່ທີ່ໄດ້ຮັບອະນຸຍາດຈາກຄິງ ຄາວຕີ້ ແລະຜູ້ຮັບເໝົາເອກະຊົນ ຫຼື ອົງການຈັດຕັ້ງສາທາລະນະ ພາຍໃຕ້ເງື່ອນໄຂຜູ້ທີ່ຈໍາເປັນຕ້ອງຮູ້ ເທົ່ານັ້ນ.
- ບໍ່ຂາຍ ຫຼື ບໍ່ເອົາຂໍ້ມູນສ່ວນຕົວຂອງທ່ານອອກໃຫ້ຄົນອື່ນໂດຍປາສະຈາກ ການເຫັນດີເຫັນພ້ອມຂອງທ່ານ ຍົກເວັ້ນ ເມື່ອກໍານົດໂດຍກົດໝາຍ, ຈໍາເປັນຕ້ອງໄດ້ໃຊ້ເພື່ອໃຫ້ສໍາເລັດທຸລະກິດຂອງຄາວຕີ້ ຫຼື ໃນສະພາບການສຸກເສີນ ສຸດຂີດທີ່ອາດເຮັດໃຫ້ເກີດຜົນຮ້າຍຕໍ່ການບາດເຈັບຢ່າງສາຫັດ ຫຼື ສູນເສັຽຊີວິດ.
- ເກັບຮັກສາຂໍ້ມູນສ່ວນຕົວໄວ້ດົນເທົ່າທີ່ຈໍາເປັນເພື່ອໃຫ້ດໍາເນີນກິດຈະການຂອງຄາວຕີ້ເທົ່ານັ້ນ ຫຼື ຕາມຂໍ້ກໍານົດ ຂອງກົດໝາຍເທົ່ານັ້ນ.

- ທໍາລາຍຂໍ້ມູນສ່ວນຕົວໃນວິທີການທີ່ປອດພັຍ ທີ່ສາມາດປ້ອງກັນການເປີດເຜີຍໄດ້.
- ນໍາໃຊ້ມາດຕະການທາງການຈັດຕັ້ງ, ທາງເຕັກໂນໂລຊີ ແລະ ທາງກາຍະພາບ ເພື່ອປົກປ້ອງຂໍ້ມູນສ່ວນຕົວ.

## ຂໍ້ມູນຄວາມລັບສ່ວນຕົວສະເພາະເຈາະຈົງຕໍ່ກັບເຄືອຂ່າຍອິນເຕີເນັດ

ພວກເຮົາເກັບກໍາຂໍ້ມູນຜ່ານລະບົບເຄືອຂາຍອິນເຕີເນັດເຊັ່ນກັນ, ບໍ່ວ່າຈະດ້ວຍວິທີບໍ່ບອກຊື່ ແລະ ແບບບຸກຄົນ.

- ຂໍ້ມູນທີ່ບໍ່ໄດ້ບົ່ງບອກຊື່ຈິງບໍ່ອາດສາມາດເຊື່ອມໂຍງເຖິງບຸກຄົນສະເພາະໃດນຶ່ງໄດ້, ດັ່ງເຊັ່ນ ການໃຊ້ຊື່ຜູ້ໃຊ້, ການເຂົ້າຢ້ຽມຢາມ ແລະ ບາງຕອນທີ່ຖືກເກັບກໍາເອົາໄວ້ໂດຍຜູ້ໃຫ້ບໍລິການອິນເຕີເນັດ. ພວກເຮົານໍາໃຊ້ຂໍ້ມູນນີ້ ເພື່ອຊ່ວຍໃຫ້ພວກເຮົາປະດິດສ້າງປະສົບການໂດຍລວມທີ່ດີກວ່າ ສໍາລັບຜູ້ນໍາໃຊ້ເວັບໄຊ໌ຂອງພວກເຮົາ.
- ຄຸກກີ້ (Cookies) ແມ່ນອີກຕົວຢ່າງໜຶ່ງຂອງຂໍ້ມູນທີ່ບໍ່ໄດ້ບົ່ງບອກຊື່ທີ່ພວກເຮົານໍາໃຊ້. ຄຸກກີ້ຂອງເວັບໄຊ໌ແມ່ນ ແຟ້ມບົດຄວາມນ້ອຍທີ່ຖືກວາງຢູ່ໃນຄອມພິວເຕີຂອງຜູ້ນໍາໃຊ້ໂດຍເຊີບເວີຂອງເວັບ. ພວກເຮົານໍາໃຊ້ຄຸກກີ້ ບາງໂອກາດ ເພື່ອປັບປຸງຂໍ້ມູນໃຫ້ສອດຄ່ອງຕໍ່ກັບຄວາມຕ້ອງການຂອງບລາວເຊີສະເພາະຂອງຜູ້ນໍາໃຊ້. ເຊີບເວີເວັບຂອງພວກເຮົາບໍ່ອາດສາມາດຈະບອກໄດ້ວ່າຂໍ້ມູນໃດໜຶ່ງກ່ຽວພັນກັບຕົວທ່ານ ອີກທັງ ມັນກໍ່ບໍ່ໄດ້ ເຮັດຫຍັງກັບຄຸກກີ້ເຫຼົ່ານີ້.
- ຂໍ້ມູນສ່ວນຕົວທີ່ເກັບກໍາໄດ້ຜ່ານເວັບໄຊ໌ແນ່ນອນໃດໜຶ່ງຂອງຄີງ ຄາວຕີ້ ແມ່ນຂໍ້ມູນທີ່ທ່ານໄດ້ໃຫ້ພວກເຮົາ ກ່ຽວກັບໂຕທ່ານເອງ. ການໃຫ້ຂໍ້ມູນພວກເຮົາຜ່ານເວັບໄຊ໌ຖືເປັນການສະໝັກໃຈຢ່າງຊື່ນເຊີງ. ຂໍ້ມູນນີ້ແມ່ນ ນໍາໃຊ້ເພື່ອຈຸດປະສົງເພື່ອໃຫ້ບໍລິການທ່ານໃຫ້ດີກວ່າ. ຖ້າຫາກ ທ່ານບໍ່ຕ້ອງການໃຫ້ຂໍ້ມູນແກ່ຄີງ ຄາວຕີ້ ຜ່ານລະບົບອິນເຕີເນັດ, ທ່ານອາດຈະສາມາດໃຫ້ຂໍ້ມູນແກ່ພວກເຮົາໄດ້ໂດຍວິທີການອື່ນ ເຊັ່ນ ການມາຫາທີ່ ຫ້ອງການຂອງຄາວຕີ້ ໃນໂມງຣັຖການ ຫຼື, ສໍາລັບການບໍລິການຂອງຄາວຕີ້ ບາງແຫ່ງ, ໃຫ້ດໍາເນີນການຂອງ ທ່ານໂດຍການສົ່ງຈົດໝາຍ ຫຼື ການໂທຣະສັບໄປຫາ.
- ເມື່ອທາງຄີງ ຄາວຕີ້ ເກັບກໍາຂໍ້ມູນສ່ວນຕົວຈາກເດັກຈາກການນໍາໃຊ້ອິນເຕີເນັດ, ຄາວຕີ້ ຈະຕ້ອງປະຕິບັດຕາມ ກົດໝາຍຣັຖບານກາງວ່າດ້ວຍການປົກປ້ອງຂໍ້ມູນສ່ວນຕົວຂອງເດັກຈາກລະບົບອິນເຕີເນັດ http://www.ftc.gov/ogc/coppa1.htm.

ເວັບໄຊ໌ຂອງຄີງ ຄາວຕີ້ ມີຈຸດເຊື່ອມຕໍ່ (links) ໄປຍັງເວັບໄຊ໌ອື່ນໆ, ເຊິ່ງລວມເຖິງສໍານັກງານຣັຖບານ, ອົງການບໍ່ຫວັງກໍາໄລ ແລະທຸລະກິດເອກະຊົນອື່ນ. ເມື່ອທ່ານໄດ້ເຊື່ອມຕໍ່ເຂົ້າໄປຍັງເວັບໄຊ໌ພາຍນອກອື່ນນັ້ນ, ໝາຍຄວາມວ່າ ທ່ານບໍ່ໄດ້ຢູ່ໃນ ເວັບໄຊ໌ ຂອງຄີງ ຄາວຕີ້ ອີກຕໍ່ໄປ ແລະແຈ້ງການວ່າດ້ວຍຂໍ້ມູນສ່ວນຕົວສະບັບນີ້ຖືວ່າໃຊ້ບໍ່ໄດ້ອີກ. ແຕ່ແທນທີ່ນັ້ນ, ທ່ານຈະຕ້ອງໄດ້ຢູ່ພາຍໃຕ້ແຈ້ງການວ່າດ້ວຍຂໍ້ມູນສ່ວນຕົວຂອງເວັບໄຊ໌ນັ້ນໆ.

## ກວດກາຄືນ ແລະ ກວດແກ້ຂໍ້ມູນສ່ວນຕົວຂອງທ່ານ

ເມື່ອມີການຮ້ອງຂໍເປັນລາຍລັກອັກສອນຫາອົງການສະເພາະຂອງຄີງ ຄາວຕີ້, ທ່ານສາມາດກວດກາຄືນຂໍ້ມູນສ່ວນຕົວ ທີ່ທາງອົງການໄດ້ຮັກສາໄວ້ກ່ຽວກັບໂຕທ່ານ ແລະ ຮ້ອງຂໍໃຫ້ທາງອົງການກວດແກ້ຂໍ້ຜິດພາດໄດ້.

ເມື່ອມີການຮ້ອງຂໍເປັນລາຍລັກອັກສອນຫາອົງການສະເພາະຂອງຄີງ ຄາວຕີ້, ທ່ານອາດຈະໄດ້ຮັບ ການແຈ້ງການ ທີ່ເປັນລາຍລັກອັກສອນໂດຍລວມ ທີ່ບົ່ງບອກໃຫ້ທ່ານຮູ້ວ່າ ພາຍໃຕ້ເງື່ອນໄຂອັນໃດແດ່ ແລະ ພາຍໃຕ້ຂໍ້ມູນສ່ວນຕົວອັນໃດ ທີ່ຢູ່ໃນການບັນທຶກສາທາລະນະຂອງອົງການ ທີ່ອາດຈະໄດ້ຮັບການເປີດເຜີຍຕໍ່ພາຍນອກ.

ຖ້າຢາກຊາບເພີ່ມເຕີມ, ຈົ່ງຕິດຕໍ່ຫາຄິງ ຄາວຕີ້ ຕາມທີ່ຢູ່ອີເມລ ຫຼື ໝາຍເລກໂທຣະສັບທີ່ລາຍການຢູ່ຂ້າງລຸ່ມນີ້.

## ຂໍ້ມູນການຕິດຕໍ່ ແລະ ທາງເລືອກພາສາ

ສຳລັບຄຳຖາມກ່ຽວກັບການຮັກສາຄວາມເປັນສ່ວນຕົວ ຫຼື ການເລືອກພາສາຕ່າງໆ, ກະລຸນາຕິດຕໍ່ຫາ ຄິງ ຄາວຕີ້ ໂດຍທາງອີເມລໄດ້ທີ່ PrivacyContact@METROKC.gov ຫຼື ຝາກຂໍ້ຄວາມໄວ້ທີ່ໝາຍເລກໂທຣະສັບ 206-205-6899.

(ພາສາທີ່ມີໃຫ້ເລືອກ: ຈີນ, ລັດເຊັຽ, ຫວຽດນາມ, ກຳປູເຈຍ, ເກົາຫລີ, ລາວ ແລະ ແອັດສະປາຍ)

## ແຈ້ງການວ່າດ້ວຍການຮັກສາຄວາມລັບສ່ວນຕົວອື່ນໆ

ບາງອົງການຈັດຕັ້ງຂອງຄິງ ຄາວຕີ້ ອາດຈະມີແຈ້ງການວ່າດ້ວຍການຮັກສາຄວາມລັບສ່ວນຕົວ ທີ່ມີຄວາມເຄັ່ງຄັດຫຼາຍກວ່າຂໍ້ມູນທີ່ມີໃຫ້ໃນແຈ້ງການວ່າດ້ວຍການຮັກສາຄວາມລັບສ່ວນຕົວສະບັບນີ້. ໃນກໍລະນີນັ້ນ, ແຈ້ງການວ່າດ້ວຍການຮັກສາຄວາມລັບສ່ວນຕົວຂອງອົງການຈັດຕັ້ງສະເພາະນັ້ນ ແມ່ນຖືວ່າມີບຸລິມະສິດນຳໃຊ້ຫຼາຍກວ່າ. ສຳລັບຄຳຖາມກ່ຽວກັບການຮັກສາຄວາມລັບສ່ວນຕົວສະເພາະເຈາະຈົງ ຕໍ່ກັບ ແຈ້ງການວ່າດ້ວຍ ການຮັກສາຄວາມລັບສ່ວນຕົວຂອງອົງການຈັດຕັ້ງຄິງ ຄາວຕີ້, ກະຣຸນາຕິດຕໍ່ຫາອົງການຈັດຕັ້ງນັ້ນໂດຍກົງເລີຍ.

ເອກະສານຮູບແບບອື່ນໆສາມາດຫາໄດ້ທີ່

206-205-6899 TTY ຣີເລ: 711